# គំរូបង្គោលព្រំដែននៅចំណុចប្រសព្វខ្សែព្រំដែន
# នៃប្រទេសទាំង៣ កម្ពុជា-ឡាវ-វៀតណាម



និមិត្តសញ្ញាជាតិផលិតអំពីលោហធាតុ
ដែលមានអង្កត់ផ្ចិត ៣០ សង់ទីម៉ែត្រ



**ສົນທິສັນຍາ**

**ວ່າດ້ວຍການກຳນົດຈຸດຄືບເສັ້ນຊາຍແດນ**

**ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,**

**ຣາຊະອານາຈັກກຳປູເຈຍ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**

---

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຣາຊະອານາຈັກກຳປູເຈຍ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ( ຕໍ່ໄປນີ້ເອີ້ນຫຍໍ້ວ່າ: " ພາຄີສາມຝ່າຍ " ).

ດ້ວຍຄວາມມຸ້ງມາດປາດຖະໜາ ໃນການຮັກສາຜົນປະໂຫຍດອັນເປັນພື້ນຖານຂອງປະຊາຊົນແຕ່ລະປະເທດ, ເພື່ອເພີ່ມທະວີ ແລະ ເສີມຂະຫຍາຍສາຍພົວພັນຖານບ້ານໃກ້ເຮືອນຄຽງ ແລະ ມິດຕະພາບ ລະຫວ່າງ ສາມປະເທດ ແນໃສ່ສ້າງບໍລິເວນຈຸດຄືບເສັ້ນຊາຍແດນໃຫ້ເປັນຊາຍແດນແຫ່ງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືຢ່າງຍາວນານ;

ບົນພື້ນຖານຫຼັກການສະເໝີພາບ, ເຄົາລົບນັບຖືອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ກັນ ແລະ ກັນ ແລະ ເຄົາລົບຜົນປະໂຫຍດອັນຊອບທຳຂອງກັນ ແລະ ກັນ;

ໄດ້ຕົກລົງກັນສ້າງສົນທິສັນຍາສະບັບນີ້:

<u>ມາດຕາ 1</u>

1. ຈຸດຄືບເສັ້ນຊາຍແດນ ລະຫວ່າງ ລາວ, ກຳປູເຈຍ ແລະ ຫວຽດນາມ ໄດ້ຕັ້ງຢູ່ຈຸດຕັດກັນຂອງເສັ້ນຊາຍແດນລາວ-ກຳປູເຈຍ, ເສັ້ນຊາຍແດນລາວ-ຫວຽດນາມ ແລະ ເສັ້ນຊາຍແດນ ກຳປູເຈຍ-ຫວຽດນາມ ຢູ່ຈຸດສູງຂອງຈອມພູທີ່ມີຄວາມ ສູງ 1086 ທີ່ໄດ້ໝາຍໄວ້ຢູ່ເທິງແຜນທີ່.

   ຈຸດດັ່ງກ່າວຫ່າງຈາກຈຸດທີ່ມີຄວາມສູງ 905 ແມັດ ໃນດິນແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄລຍະ 1,83 ກິໂລແມັດ ໄປທາງທິດເໜືອ-ຕາເວັນຕົກສ່ຽງເໜືອ, ຫ່າງຈາກຈຸດທີ່ມີຄວາມສູງ 930 ແມັດ ໃນດິນແດນຂອງ ຣາຊະອານາຈັກກຳປູເຈຍ ໄລຍະ 2,30 ກິໂລແມັດ ໄປທາງທິດຕາເວັນຕົກສ່ຽງໃຕ້, ຫ່າງຈາກຈຸດທີ່ມີຄວາມສູງ 918 ແມັດ ໃນດິນແດນຂອງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ໄລຍະ 3,11 ກິໂລແມັດ ໄປທາງທິດຕາເວັນອອກສ່ຽງໃຕ້, ( ວັດແທກເທິງແຜນທີ່ຕິດແນບສົນທິສັນຍາວ່າດ້ວຍການກຳນົດຈຸດຄືບເສັ້ນຊາຍແດນລາວ-ຫວຽດນາມ-ກຳປູເຈຍ ມາດຕາສ່ວນ 1:50.000 ).

2. ຄ່າພິກັດພູມສາດຂອງຈຸດຄືບເສັ້ນຊາຍແດນລະຫວ່າງສາມປະເທດຄື: ເສັ້ນຂະໜານເໜືອ $14^{0}$ 41'09,80'', ເສັ້ນແວງ $107^{0}$33'23,79''; ຄ່າພິກັດໜ້າພຽງ X=1625161,02 ແມັດ, Y= 775331,60 ແມັດ, ຄວາມສູງຕົວຈິງ 1081 ແມັດ (ຂໍ້ມູນດັ່ງກ່າວວັດແທກຢູ່ພູມີປະເທດຕົວຈິງ).

3. ທີ່ຕັ້ງຈຸດຄືບເສັ້ນຊາຍແດນລະຫວ່າງສາມປະເທດ ໄດ້ແຕ້ມເຄື່ອງໝາຍດ້ວຍເມັດສີແດງຢູ່ໃນວົງມົນທີ່ມີເສັ້ນຜ່າກາງ 3 ມິລິແມັດ ເປັນຈຸດທີ່ຕັ້ງຫລັກໝາຍເທິງແຜນ ທີ່ມາດຕາສ່ວນ 1:50.000 ທີ່ໄດ້ລົງນາມໂດຍພາຄີສາມຝ່າຍ. ແຜນທີ່ສະບັບນີ້ຕິດແນບສົນທິ ສັນຍາ ແລະ ເປັນພາກສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກສົນທິສັນຍາສະບັບນີ້.

**ມາດຕາ 2**

1. ພາຄີສາມຝ່າຍໄດ້ເອກະພາບກັນປັກຫຼັກໝາຍໃສ່ຈຸດທີ່ຖືກຕ້ອງດ້ວຍຫີນກຣານິດ ຢູ່ຈຸດຄີບເສັ້ນຊາຍແດນລະຫວ່າງສາມປະເທດ ( ແຜນວາດທີ່ຕັ້ງຫລັກໝາຍ ແລະ ບົດບັນທຶກການປັກຫລັກໝາຍໄດ້ຕິດແນບສົນທິສັນຍາສະບັບນີ້ ).
2. ພາຄີສາມຝ່າຍຈະຕ້ອງປົກປັກຮັກສາຫຼັກໝາຍຊາຍແດນ ແລະ ໃຊ້ທຸກມາດຕະການທີ່ຈຳເປັນເພື່ອປ້ອງກັນບໍ່ໃຫ້ຫຼັກໝາຍຊາຍແດນຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍ. ຝ່າຍໃດຝ່າຍໜຶ່ງບໍ່ມີສິດເຄື່ອນຍ້າຍ, ປ່ຽນແປງຮູບແບບ, ລວມທັງການປັກຫຼັກໝາຍໃໝ່ ຕາມລຳພັງແຕ່ຝ່າຍດຽວ.
3. ຖ້າຝ່າຍໃດຝ່າຍໜຶ່ງພົບເຫັນຫຼັກໝາຍຖືກເຄື່ອນຍ້າຍ, ເປ່ເພ ຫຼື ຖືກທຳລາຍຕ້ອງແຈ້ງໃຫ້ອີກສອງຝ່າຍຊາບຢ່າງທັນການ. ພາຄີສາມຝ່າຍຕ້ອງດຳເນີນການຢ່າງຖືກຕ້ອງຕາມທີ່ຕັ້ງຂອງຫລັກໝາຍເດີມດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 1 ຂອງສົນທິສັນຍາສະບັບນີ້ ແລະ ຕາມລັກສະນະຮູບແບບ, ຂະໜາດເດີມທີ່ໄດ້ກຳນົດໄວ້ໃນ " ຮູບແບບຫຼັກໝາຍຈຸດຄີບເສັ້ນຊາຍແດນລາວ-ກຳປູເຈຍ-ຫວຽດນາມ " ຕິດແນບສົນທິສັນຍາສະບັບນີ້, ພາຍຫລັງທີ່ໄດ້ສ້ອມແປງຫຼັກໝາຍເກົ່າຄືນ ແລະ ປັກຫຼັກໝາຍໃຫ້ຖືກຈຸດທີ່ຕັ້ງເດີມ. ຫລັງຈາກສຳເລັດການສ້ອມແປງຄືນໃໝ່ແລ້ວນັ້ນ ພາຄີສາມຝ່າຍຈະຕ້ອງໄດ້ລົງນາມບົດບັນທຶກຮ່ວມກັນ.

**ມາດຕາ 3**

ສົນທິສັນຍາສະບັບນີ້ ຈະຕ້ອງໄດ້ຮັບການຮັບຮອງ ຫຼື ໃຫ້ສັດຕະຍາບັນ ໂດຍພາຄີສາມຝ່າຍຕາມຂັ້ນຕອນທາງດ້ານກົດໝາຍຂອງແຕ່ລະປະເທດ. ພາຄີສາມຝ່າຍຈະແຈ້ງໃຫ້ກັນຊາບໂດຍຜ່ານທາງການທູດ. ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ນັບຕັ້ງແຕ່ມື້ທີ່ສາມຝ່າຍໄດ້ສຳເລັດການແລກປ່ຽນເອກະສານສະບັບສຸດທ້າຍ.

ສົນທິສັນຍາສະບັບນີ້ ລົງນາມທີ່ນະຄອນຫລວງຮ່າໂນ້ຍ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໃນວັນທີ 26 ສິງຫາ 2008 ເປັນສາມສະບັບຕົ້ນ, ແຕ່ລະສະບັບເປັນພາສາລາວ, ພາສາຂະແມ ແລະ ພາສາຫວຽດ ທັງສາມພາສາມີຄຸນຄ່າເທົ່າທຽມກັນ. ພ້ອມດຽວກັນ ພາຄີສາມຝ່າຍເປັນເອກະພາບກັນຮັບຮອງເອົາສະບັບພາສາຝຣັ່ງ ເພື່ອເປັນການສົມທຽບ.

| | | |
|---|---|---|
| ຜູ້ຕາງໜ້າທີ່ມີອຳນາດເຕັມ<br>ສາທາລະນະລັດ ປະຊາທິປະໄຕ<br>ປະຊາຊົນລາວ | ຜູ້ຕາງໜ້າທີ່ມີອຳນາດເຕັມ<br>ຣາຊະອານາຈັກກຳປູເຈຍ | ຜູ້ຕາງໜ້າທີ່ມີອຳນາດເຕັມ<br>ສາທາລະນະລັດ ສັງຄົມນິຍົມຫວຽດນາມ |
| ພົງສະຫວັດ ບຸບຜາ | ວາ ກິມ ຮົງ | ຫວູ ຢຸ້ງ |

# ຮູບແບບຫຼັກໝາຍຈຸດຄີບເສັ້ນຊາຍແດນ

# ສາມປະເທດລາວ-ກຳປູເຈຍ-ຫວຽດນາມ



ກາຊາດເຮັດດ້ວຍໂລຫະປະສົມ
ເສັ້ນຜ່ານສູນກາງ 30 ຊັງຕີແມດ

